# ຄູ່ມືການຝຶກອົບຮົມການສ້າງຄວາມສາມາດຂັ້ນພື້ນຖານກ່ຽວກັບການຜະລິດ ກະສິກຳອິນຊີໃຫ້ແກ່ຊາວກະສິກອນ, ກຸ່ມບ້ານພັດທະນາເຂດຄັງວຽງ

# ເມືອງ ແປກ, ແຂວງ ຊຽງຂວາງ



## ຂັ້ນກຸ່ມບ້ານ ແລະ ບ້ານ


*ຂຽນໂດຍ:* *ສຸວັນເພັງ ພົມມະສານ*

*ອຸລາທອງ ວົງວຽງຄຳ*

*ກວດແກ້ໂດຍ:* *ຄຳພາ ແກ້ວມະນີຈັນ*

## ສາລະບານ


ບົດນຳ ..... 5

ພາກທີ I: ..... 6

ບົດຮຽນ 1.1: ພາກແນະນຳຕົນເອງ ແລະ ສະເໜີຄວາມຄາດຫວັງ ..... 6

ອະທິບາຍຫຍໍ້: ..... 6

ຈຸດປະສົງ: ..... 6

ອຸປະກອນ: ..... 6

ເວລາທີ່ໃຊ້: ..... 6

ຂັ້ນຕອນ ແລະ ເນື້ອໃນ: ..... 6

ຕົວຢ່າງ: ຄວາມຄາດຫວັງຂອງຜູ້ເຂົ້າຮ່ວມທີ່ເມືອງຈຳພອນ ແຂວງສະຫວັນນະເຂດ ..... 7

ບົດຮຽນ 1.2: ຈັດຕັ້ງກຸ່ມສົນທະນາ, ສ້າງລະບຽບ ແລະ ປະເມີນຜົນກ່ອນການຝຶກອົບຮົມ ..... 8

ອະທິບາຍຫຍໍ້: ..... 8

ຈຸດປະສົງ: ..... 8

ອຸປະກອນ: ..... 8

ເວລາທີ່ໃຊ້: ..... 9

ຂັ້ນຕອນ ແລະ ເນື້ອໃນ ..... 9

ຕົວຢ່າງ: ການກຳນົດລະບຽບ ແລະ ເວລາຂອງການຝຶກອົບຮົມຢູ່ເມືອງຈຳພອນ ແຂວງສະຫວັນນະເຂດ. ..... 9

ກ. ການກຳນົດເວລາຝຶກອົບຮົມໃນແຕ່ລະວັນ ..... 9

ຂ. ການກຳນົດລະບຽບໃນເວລາຝຶກອົບຮົມ: ..... 10

ຄ. ການຈັດຕັ້ງກຸ່ມສິດເວນປະຈຳວັນ ..... 10

ພາກທີ II: ຄວາມຮູ້ພື້ນຖານກ່ຽວກັບການຜະລິດກະສິກຳອິນຊີ ..... 11

ບົດທີ 2.1: ປະຫວັດຄວາມເປັນມາຂອງກະສິກຳອິນຊີ ..... 11

ອະທິບາຍຫຍໍ້: ..... 12

ນິຍາມຄຳວ່າລະບົບກະສິກຳອິນຊີ ..... 12

ຈຸດປະສົງ: ..... 12

ອຸປະກອນ: ..... 13

ເວລາທີ່ໃຊ້:......13
ຂັ້ນຕອນ:......13
ອະທິບາຍຈຸດປະສົງໃຫ້ຜູ້ເຂົ້າຮ່ວມຮັບຮູ້:......13
ບົດຮຽນ 2.2 ກະສິກຳອິນຊີ ແມ່ນຫຍັງ ?......13
ອະທິບາຍຫຍໍ້......13
ນິຍາມຂອງລະບົບກະສິກຳອິນຊີ:......14
ຈຸດປະສົງ:......14
ອຸປະກອນ:......14
ເວລາທີ່ໃຊ້:......15
ຂັ້ນຕອນ:......15
ອະທິບາຍຈຸດປະສົງໃຫ້ຜູ້ເຂົ້າຮ່ວມຮັບຮູ້:......15
ຫຼັກການລວມ ຂອງການຜະລິດກະສິກຳອິນຊີ......15
ເຮັດແນວໃດເພື່ອຮັບປະກັນຄຸນະພາບໃນການຜະລິດກະສິກຳອິນຊີ......15
ຜົນປະໂຫຍດຂອງການເຮັດກະສິກຳອິນຊີ ແມ່ນຫຍັງ ?......16
ການຜະລິດເຂົ້າອິນຊີ......17
ຈຸດປະສົງຕົ້ນຕໍຂອງການສ້າງຕັ້ງກຸ່ມຜະລິດເຂົ້າອິນຊີ:......17
ພາກທີ III: ໂຄງຮ່າງການຈັດຕັ້ງກຸ່ມ......18
ບົດທີ 3.1: ສິດ ແລະ ໜ້າທີ່ຂອງກຸ່ມ......18
ໂຄງຮ່າງການຈັດຕັ້ງກຸ່ມໂດຍທົ່ວໄປແລ້ວຈະປະກອບດ້ວຍ ຫົວໜ້າກຸ່ມ, ຮອງກຸ່ມ, ຄະນະກຸ່ມ ແລະ ສະມາຊິກກຸ່ມ ທີ່ມີໜ້າທີ່ຮັບຜິດຊອບແຕກຕ່າງກັນເຊັ່ນ:......18
ໂຄງຮ່າງການຈັດຕັ້ງກຸ່ມ......18
ພາລະບົດບາດ ແລະ ຄວາມຮັບຜິດຊອບ:......19
ພາກທີ IV: ລະບົບການຄຸ້ມຄອງພາຍໃນ......21
ບົດຮຽນທີ 4.1: ລະບົບການຄຸ້ມຄອງພາຍໃນແມ່ນຫຍັງ?......21
ຄຳນິຍາມ:......21
ຈຸດປະສົງ:......21

ອຸປະກອນ: 21
ເວລາທີ່ໃຊ້: 21
ເນື້ອໃນບົດຮຽນ 21
ຂັ້ນຕອນຕ່າງໆຂອງລະບົບການຄຸ້ມຄອງພາຍໃນມີຫຍັງແດ່? 21
ກ. ການສ້າງລະບຽບ ແລະ ຂໍ້ກຳນົດພາຍໃນຂອງກຸ່ມຜູ້ຜະລິດກະສິກຳອິນຊີ 22
ຂ. ການຮັບສະມາຊິກ ແລະ ການກວດກາຄຸ້ມຄອງຟາມໃຫ້ມີຄວາມສະໝ່ຳສະເໝີທາງດ້ານຄຸນະພາບ ແລະ ປະລິມານ 22
ຄ. ການຂຶ້ນທະບຽນ ແລະ ຮັບຮອງເອົາສະມາຊິກພາຍໃນກຸ່ມ 22
ງ. ການພົວພັນກັບໜ່ວຍງານອອກໃບຢັ້ງຢືນ 23
ບົດທີ 4.2: ບົດຮຽນການຄຸ້ມຄອງພາຍໃນ, ການກວດກາ ແລະ ການຕິດຕາມ 23
ອະທິບາຍຫຍໍ້: 23
ຈຸດປະສົງ: 23
ອຸປະກອນ: 24
ເວລາທີ່ໃຊ້: 24
ຂັ້ນຕອນ ແລະ ເນື້ອໃນ: 24
ກ. ການກວດກາເອກະສານທີ່ກ່ຽວຂ້ອງກັບຟາມເຊັ່ນ: 24
ຂ. ລະບົບການບັນທຶກຂໍ້ມູນ ແລະ ການເກັບມ້ຽນຂໍ້ມູນຂອງສະມາຊິກແຕ່ລະຄົນ: 24

# ບົດນຳ

ປຶ້ມເຫຼັ້ມນີ້ ແມ່ນພັດທະນາຂຶ້ນມາເພື່ອແນ່ໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວິຊາການ ແລະ ບັນດາຊາວກະ ສິກອນເຂດຄັງວຽງ, ເມືອງແປກ, ແຂວງ ຊຽງຂວາງ ໃຫ້ເຂົ້າໃຈແຈ້ງເຖິງຄວາມໝາຍຄວາມສຳຄັນຂອງຄຳວ່າ: ກະສິກາອິນຊີ ຫຼື ວ່າມາດຕະຖານກະສິກຳອິນຊີ. ນອກຈາກນັ້ນ, ຍັງເປັນຄູ່ມືທີ່ນຳໃຊ້ເຂົ້າໃນການຝຶກອົບຮົມໃຫ້ແກ່ນັກກວດກາຂັ້ນບ້ານ ທີ່ນຳໄປໝູນໃຊ້ເຂົ້າໃນວຽກງານກວດກາພາຍໃນກ່ອນຈະສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງລົງມາອອກໃບຢັ້ງຢືນກະສິກຳອິນຊີ.

ການກວດກາມາດຕະຖານກະສິກຳອິນຊີ ເປັນການກວດສອບເບິ່ງວ່າຊາວກະສິກອນ ຫຼື ຊາວນາ ໄດ້ປະຕິບັດຕາມມາດຕະຖານກະສິກຳອິນຊີຫຼືບໍ? ດ້ວຍເຫດນີ້ ນັກກວດສອບ ຫຼື ວ່າກຸ່ມຜູ້ຜະລິດຕ່າງໆຕ້ອງໄດ້ຮຽນຮູ້ ແລະ ມີຄວາມເຂົ້າໃຈຄຳວ່າມາດຕະຖານອິນຊີເປັນຢ່າງດີ ເພື່ອແນ່ໃສ່ປະຕິບັດກົດລະບຽບຢ່າງເຄັ່ງຂັດ. ສະນັ້ນ, ນັກວິຊາການທີ່ຈະລົງໄປກວດສອບແຕ່ລະຄັ້ງຕ້ອງໄດ້ນຳເອົາປຶ້ມມາດຕະຖານກະສິກຳອິນຊີໄປພ້ອມທຸກໆຄັ້ງ ເພາະວ່ານັກກວດສອບເອງກໍ່ໄດ້ປະຕິບັດຕາມຫຼັກການຢ່າງເຂັ້ມງວດ.

ປຶ້ມເຫຼັ້ມດັ່ງກ່າວນີ້ ແມ່ນໄດ້ອອກແບບໃຫ້ມີຄວາມເໝາະສົມກັບສະພາບຄວາມຮູ້ ແລະ ຄວາມສາມາດຂອງຊາວກະສິກອນ ຫຼື ຊາວນາຜູ້ທີ່ສົນໃຈຢາກຮຽນຮູ້ທິດສະດີຂັ້ນພື້ນຖານກ່ຽວກັບບັນດາຂໍ້ກຳນົດ, ກົດລະບຽບຕ່າງໆທີ່ນຳມາໃຊ້ໃນການຜະລິດກະສິກຳອິນຊີທີ່ມີມາດຕະຖານ.

ສະນັ້ນ, ຄຳສັບທີ່ນຳມາໃຊ້ໃນປຶ້ມເຫຼັ້ມດັ່ງກ່າວນີ້ ບໍ່ໄດ້ເໜັ້ນໜັກໃສ່ຄຳສັບທາງດ້ານວິຊາການແຕ່ໄດ້ນຳໃຊ້ຄຳຊັບແບບງ່າຍ ເຊິ່ງປະຊາຊົນ ຫຼື ວ່າກະສິກອນອ່ານແລ້ວເຂົ້າໃຈງ່າຍມີຄວາມຈະແຈ້ງ ແລະ ເວລາອ່ານແລ້ວສາມາດມະໂນພາບອອກໄດ້ດ້ວຍຈິນຕະນາການ ພ້ອມທັງມີຄວາມເພີ້ດເພີນໄປກັບການອ່ານ.

ຂ້າພະເຈົ້າ, ໃນນາມຕາງໜ້າໃຫ້ແກ່ສະມາຄົມຮ່ວມໃຈຊາວກະສິກອນເຂດຄັງວຽງ ຂໍສະແດງຄວາມຂອບໃຈມາຍັງອົງກອນຜູ້ໃຫ້ທຶນ NCA ປະຈຳສາທາລະນະລັດປະຊາທິປະໄຕປະຊາຊົນລາວ, *Asia DHRRA* ແລະ AGRICORD ທີ່ໃຫ້ທຶນສະໜັບສະໜູນໃນການສ້າງຄວາມອາດສາມາດໃຫ້ແກ່ສະມາຄົມຮ່ວມໃຈຊາວກະສິກອນເຂດຄັງວຽງ, ກຸ່ມບ້ານພັດທະນາຄັງວຽງ ເມືອງແປກ, ແຂວງ ຊຽງຂວາງ.

ທ່ານ. ຄຳພາ ແກ້ວມະນີຈັນ

ຕາງໜ້າສະມາຄົມຮ່ວມໃຈຊາວກະສິກອນເຂດຄັງວຽງາ

# ພາກທີ I:

## ບົດຮຽນ 1.1: ພາກແນະນຳຕົນເອງ ແລະ ສະເໜີຄວາມຄາດຫວັງ

### ອະທິບາຍຫຍໍ້:

ບາດກ້າວທຳອິດໃນການຝຶກອົບຮົມມີຄວາມສຳຄັນຫຼາຍເປັນການເປີດຫົວເລື່ອງ ພ້ອມທັງແນະນຳນັກສຳມະນາກອນຜູ້ເຂົ້າຮ່ວມຝຶກອົບຮົມທັງໝົດໃຫ້ຮູ້ຈັກກັນໃນເບື້ອງຕົ້ນ. ການແນະນຳສາມາດເຮັດໄດ້ຫຼາຍວິທີ ແຕ່ທີ່ສຳຄັນທີ່ສຸດຄູຝຶກຄວນຈະພິຈາລະນາວ່າຈະເຮັດແນວໃດໃຫ້ນັກສຳມະນາກອນທັງໝົດ ສາມາດສ້າງສາຍສຳພັນກັນໃນເບື້ອງຕົ້ນຢ່າງໜ້ອຍແຕ່ລະຄົນຄວນແນະນຳໃຫ້ຮູ້ຈັກຊື່ໜ້າທີ່ການງານ ແລະ ຂໍ້ມູນອື່ນໆກໍ່ຍິ່ງເປັນການດີ ເພື່ອໃຫ້ເຂົາເຈົ້າມີຄວາມລຶ້ງເຄີຍກັນ ແລະ ບໍ່ເຂີນອາຍກັນໃນເວລາຝຶກອົບຮົມ.

### ຈຸດປະສົງ:

- ✓ ເພື່ອສ້າງຄວາມລຶ້ງເຄີຍເຊິ່ງກັນ ແລະ ກັນຂອງນັກສຳມະນາກອນຜູ້ທີ່ເຂົ້າຮ່ວມຝຶກອົບຮົມ
- ✓ ເພື່ອຫຼຸດຜ່ອນຄວາມເຂີນອາຍ ແລະ ກ້າສະແດງອອກໃນການປະກອບຄຳຄິດເຫັນຕ່າງໆ
- ✓ ເພື່ອທົບທວນຄືນຄວາມຄາດຫວັງຫຼັງຈາກສິ້ນສຸດກອງປະຊຸມຝຶກອົບຮົມ

### ອຸປະກອນ:

- ເຈັ້ຍແຜ່ນໃຫຍ່
- ເຈັ້ຍ A4
- ບິກເຟີດ
- ສະກ໋ອດ
- ກະດານ

### ເວລາທີ່ໃຊ້:

- ✓ ໃຊ້ເວລາ 15 ນາທີ

### ຂັ້ນຕອນ ແລະ ເນື້ອໃນ:

- ຄູຝຶກຕ້ອງແນະນຳຕົນເອງຕໍ່ນັກສຳມະນາກອນເຊັ່ນສະເໜີຊື່, ໜ້າທີ່ຮັບຜິດຊອບ, ພາກສ່ວນທີ່ຕົນເອງສັງກັດຢູ່ ແລະແນະນຳກ່ຽວກັບວຽກງານເປັນຕົ້ນແມ່ນປະສົບການຂອງຕົນເອງທີ່ຜ່ານມາເພື່ອສ້າງຄວາມເຊື່ອຖື ແລະ ຄວາມໝັ້ນໃຈໃຫ້ນັກສຳມະນາກອນຜູ້ທີ່ເຂົ້າຮ່ວມ.

- ຫຼັງຈາກປະຕິບັດກິດຈະກຳແລ້ວຄູຝຶກກໍ່ເຊີນໃຫ້ຜູ້ເຂົ້າຮ່ວມນັ່ງປະຈຳບ່ອນໃຜລາວ, ແຈກຢາຍບັດຄຳ ແລະ ບິກເຟີດ ໃຫ້ຜູ້ເຂົ້າຮ່ວມທຸກຄົນ ເພື່ອໃຫ້ເຂົາເຈົ້າໄດ້ຂຽນຄວາມຄາດຫວັງຂອງຕົນເອງທີ່ຕ້ອງການຮຽນຮູ້ຈາກການຝຶກອົບຮົມໃນຄັ້ງນີ້ເປັນຕົ້ນ
- ຕໍ່ຈາກນັ້ນຄູຝຶກກໍ່ຕ້ອງໄດ້ອະທິບາຍກ່ຽວກັບວິທີການຂຽນຄວາມຄາດຫວັງຂອງຕົນເອງ (ຂອງຜູ້ເຂົ້າຮ່ວມ) ລົງໃສ່ບັດຄຳ: ຫຼັງຈາກນັ້ນກໍ່ເຊີນຊວນໃຫ້ຜູ້ເຂົ້າຮ່ວມນັ້ນຂຽນຄວາມຄາດຫວັງຂອງຕົນເອງກ່ຽວກັບການມາຝຶກອົບຮົມຄັ້ງນີ້ລົງໃສ່ບັດຄຳໃຫ້ຂຽນ 1 ຄວາມຄາດຫວັງຕໍ່ 1 ບັດ. ຄວາມຄາດຫວັງດັ່ງກ່າວອາດຈະແມ່ນບົດຮຽນທີ່ຕ້ອງການຮຽນຮູ້ຈາກການຝຶກອົບຮົມທາງດ້ານວິຊາການ, ການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງ ແລະ ອື່ນໆທີ່ກ່ຽວຂ້ອງກັບຫົວຂໍ້ຂອງການຝຶກອົບຮົມ
- ຫຼັງຈາກນັກສຳມະນາກອນຂຽນຄວາມຄາດຫວັງໃສ່ບັດຄຳຮຽບຮ້ອຍແລ້ວ ຄູຝຶກກໍ່ເກັບກຳເອົາບັດຄຳຈາກຜູ້ເຂົ້າຮ່ວມນຳໄປຕິດໃສ່ເຈ້ຍແຜ່ນໃຫຍ່ ໂດຍໃຫ້ຈັດເປັນໝວດ ແລະ ໃຫ້ແຍກຄວາມຄາດຫວັງທີ່ບໍ່ກ່ຽວຂ້ອງກັບຫົວຂໍ້ກອງປະຊຸມອອກຕ່າງຫາກ. ຄູຝຶກຄວນອະທິບາຍໃຫ້ຜູ້ເຂົ້າຮ່ວມຮັບຮູ້ວ່າຄວາມຄາດຫວັງດັ່ງກ່າວທີ່ແຍກອອກຕ່າງຫາກບໍ່ສາມາດຕອບສະໜອງໃນກອງປະຊຸມດັ່ງກ່າວນີ້ໄດ້ ຫຼື ອະທິບາຍອື່ນໆແລ້ວແຕ່ຄວາມເໝາະສົມ ເພື່ອໃຫ້ນັກສຳມະນາກອນເຂົ້າໃຈ

## ຕົວຢ່າງ: ຄວາມຄາດຫວັງຂອງຜູ້ເຂົ້າຮ່ວມທີ່ເມືອງຈຳພອນ ແຂວງສະຫວັນນະເຂດ

1. ຢາກຮູ້ການປັບຕົວກ່ຽວກັບຫຼັກການພື້ນຖານການຜະລິດເຂົ້າອິນຊີ
2. ຢາກຮູ້ວິທີການຜະລິດເຂົ້າອິນຊີ ແລະ ພືດຜັກປອດສານພິດທີ່ມີປະສິດທິຜົນ
3. ຢາກຮຽນຮູ້ບົດບາດຂອງແມ່ຍິງທີ່ກ່ຽວຂ້ອງກັບການຜະລິດເຂົ້າອິນຊີ
4. ຄວາມຄາດຫວັງກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ກຸ່ມຊາວນາ
5. ຢາກຮຽນຮູ້ວິທີການບໍລິຫານຈັດການຮັກສາການຜະລິດກະສິກຳອິນຊີ
6. ຢາກຮູ້ບົດບາດຍິງ-ຊາຍຕໍ່ກັບສະພາບການປ່ຽນແປງຂອງດິນຟ້າອາດໃນປະຈຸບັນ ແລະ ໃນອະນາຄົດ
7. ຢາກຮຽນຮູ້ຜົນກະທົບຕ່າງໆຈາກການປ່ຽນແປງສະພາບດິນຟ້າອາກາດ ທີ່ສົ່ງຜົນກະທົບຕໍ່ລະບົບນິເວດກະສິກຳ
8. ຢາກຮຽນຮູ້ການຜະລິດຝຸ່ນບົ່ມ ເພື່ອນຳໃຊ້ເຂົ້າໃນການຜະລິດເຂົ້າອິນຊີ

## ບົດຮຽນ 1.2: ຈັດຕັ້ງກຸ່ມສົນທະນາ, ສ້າງລະບຽບ ແລະ ປະເມີນຜົນກ່ອນການຝຶກອົບຮົມ

### ອະທິບາຍຫຍໍ້:

ອີງຕາມປະສົບການທີ່ເຄີຍເຮັດຜ່ານມາໃນທຸກໆຄັ້ງ ຖ້າຫາກມີການຈັດຝຶກອົບຮົມລະດັບນັກວິຊາການໃນດ້ານຕ່າງໆ ສ່ວນໃຫຍ່ແລ້ວ ເພິ່ນມັກແບ່ງກຸ່ມສົນທະນາ ແລະ ກຸ່ມເປັນສິດເວນປະຈໍາວັນ ເພື່ອຄວາມສະດວກໃນການຕິດຕາມນັກສໍາມະນາກອນທີ່ເຂົ້າມາຮ່ວມຝຶກອົບຮົມ. ອີກດ້ານໜຶ່ງແມ່ນແນໃສ່ໃຫ້ບັ້ນຝຶກອົບຮົມດັ່ງກ່າວນີ້ມີປະສິດທິພາບ ແລະ ປະສິດທິຜົນຂຶ້ນຕື່ມ. ດ້ວຍເຫດນີ້ ການແບ່ງນັກສໍາມະນາກອນອອກເປັນກຸ່ມຍ່ອຍນັ້ນກໍ່ເພື່ອໃຫ້ຜູ້ເຂົ້າຮ່ວມມີໂອກາດໄດ້ສົນທະນາແລກປ່ຽນຄວາມຮູ້, ປະສົບການເຊິ່ງກັນ ແລະກັນຫຼາຍຂຶ້ນ. ເພື່ອໃຫ້ມີການຕິດຕາມສະຫຼຸບລາຍງານ, ການຈັດຕັ້ງປະຕິບັດໂມງເວລາ, ການປະຕິບັດກົດລະບຽບໃນເວລາທີ່ຝຶກອົບຮົມຢ່າງເຄັ່ງຄັດ ແລະເປັນລະບຽບຮຽບຮ້ອຍດີ. ການປະເມີນກ່ອນການຝຶກອົບຮົມນັ້ນແມ່ນເພື່ອຕ້ອງການຢັ່ງເບິ່ງ (ວັດແທກ) ແນວຄວາມຄິດ, ຄວາມຮູ້ຄວາມເຂົ້າໃຈຂອງ (ຂະເຈົ້າ) ຜູ້ເຂົ້າຮ່ວມ ຍິ່ງໄປກ່ວານັ້ນ ຄູຝຶກຕ້ອງການວິເຄາະກ່ອນການຝຶກອົບຮົມວ່ານັກສໍາມະນາກອນທີ່ເຂົ້າມາຝຶກອົບຮົມໃນຄັ້ງນີ້ເຂົາເຈົ້າຕ້ອງການຮຽນຮູ້ຫຍັງແດ່ ແລະ ອີກປະການໜຶ່ງຜົນຂອງການຄາດຫວັງຂອງນັກສໍາມະນາກອນ ຍັງໃຊ້ວັດແທກການຝຶກອົບຮົມຫຼັງຈາກສິ້ນສຸດໄປແລ້ວ ຜົນໄດ້ຮັບຫຼັງຈາກສໍາເລັດການຝຶກອົບຮົມວ່າ: ນັກສໍາມະນາກອນມີຄວາມເຂົ້າໃຈຫຼາຍໜ້ອຍປານໃດ, ສິ່ງທີ່ພວກເຂົາເຈົ້າໄດ້ຮຽນຜ່ານມານັ້ນ. ຖ້າຫາກວັດແທກເບິ່ງແລ້ວນັກສໍາມະນາກອນມີຄວາມເຂົ້າໃຈຢູ່ໃນລະດັບຕໍ່າ ຄູຝຶກກໍ່ຕ້ອງໄດ້ໄປປັບປຸງຫຼັກສູດຄືນ ຫຼື ວ່າຊອກວິທີການສິ່ງຄວາມຮູ້ແກ່ນັກສໍາມະນາກອນຕື່ມອີກ ເພາະການສອນຊຸມຊົນ ຫຼື ວ່າຊາວບ້ານນັ້ນມັນມີຄວາມແຕກຕ່າງຈາກການສອນລະດັບວິຊາການ ຫຼື ພະນັກງານຂັ້ນຕ່າງໆໂດຍສິ້ນເຊີງ. ສະນັ້ນ, ການກະກຽມບົດສອນ ຫຼື ຫຼັກສູດນັ້ນແມ່ນຈະໄດ້ເນັ້ນໜັກໃສ່ການນໍາພາເຮັດກິດຈະກໍາຫຼາຍກ່ວາສອນດ້ວຍທິດສະດີພາຍໃນຫ້ອງ.

### ຈຸດປະສົງ:

- ✓ ເພື່ອໃຫ້ຜູ້ເຂົ້າຮ່ວມ (ສໍາມະນາກອນ) ມີກຸ່ມສົນທະນາແລກປ່ຽນບົດຮຽນ ແລະ ປະຕິບັດກິດຈະກໍາຮ່ວມກັນໃນເວລາຝຶກອົບຮົມ
- ✓ ເພື່ອໃຫ້ມີຄວາມເປັນລະບຽບໃນການຝຶກອົບຮົມ ແລະ ຕິດຕາມນັກສໍາມະນາກອນໄດ້ງ່າຍ ພ້ອມທັງມີປະສິດທິພາບ
- ✓ ເພື່ອສ້າງໃຫ້ກຸ່ມຄົ້ນຄ້ວານັ້ນມີຄວາມຮັບຜິດຊອບ ແລະ ຮຽນຮູ້ໂດຍການປະຕິບັດກິດຈະກໍາຕົວຈິງກັບທີມງານດ້ວຍຕົນເອງ ເພາະວ່າແຕ່ລະຄົນນັ້ນອາດຈະມີປະສົບປະການທີ່ແຕກຕ່າງກັນ

### ອຸປະກອນ:

- ເຈັ້ຍແຜ່ນໃຫຍ່ ແລະ ເຈັ້ຍ A4
- ບິກເຟີດ
- ເຈັ້ຍບັດຄໍາ
- ສະກ໋ອດ

- ກະດານ

## ເວລາທີ່ໃຊ້:

- ✓ ໃຊ້ເວລາ 15 ນາທີ

## ຂັ້ນຕອນ ແລະ ເນື້ອໃນ

1. ກ່ອນອື່ນໝົດສະເໜີໃຫ້ທີ່ປະຊຸມທັງໝົດຄົ້ນຄ້ວາລະບຽບທີ່ຈະຈັດຕັ້ງປະຕິບັດ ເຊິ່ງມີຫົວຂໍ້ດັ່ງລຸ່ມນີ້:

   ກ. ການປະຕິບັດເວລາ (ຕົວຢ່າງ: ມາຊ້າບໍ່ເກີນ 5 ນາທີ)

   ຂ. ການນໍາໃຊ້ມືຖື (ຕົວຢ່າງ: ໃຫ້ປິດໂທລະສັບມືຖື ແລະ ເປີດກໍ່ໄດ້ແຕ່ໃຫ້ໃຊ້ລະບົບສັ່ນ)

   ຄ. ການມີສ່ວນຮ່ວມຂອງທຸກຄົນ (ຕົວຢ່າງ: ໃຫ້ກຽດຜູ້ທີ່ກໍາລັງເວົ້າ/ສະເໜີ)

   ງ. ຖ້າຜິດລະບຽບດັ່ງກ່າວໃຫ້ປະຕິບັດວິໄນ ໂດຍໃຫ້ສ້າງບັນຍາກາດເຊັ່ນ: ໃຫ້ຮ້ອງເພັງ, ຟ້ອນລໍາ, ເລົ່ານິທານ

2. ຫຼັງຈາກທີ່ນັກສໍາມະນາກອນທີ່ຢູ່ໃນຫ້ອງຮຽນນັ້ນ ມີຄວາມເປັນເອກກະພາບກັນກ່ຽວກັບລະບຽບແລ້ວໃຫ້ທີ່ປະຊຸມຈັດເປັນກຸ່ມ (ກິດຈະກໍາທີຊອກຫາໝູ່ຢູ່ໃສ ຫຼື ກິດຈະກໍາໃດກໍ່ໄດ້ ສຸດແລ້ວແຕ່ຄູຝຶກຈະອອກແບບມາ ເພື່ອໃຫ້ມີຄວາມແທດເໝາະກັບນັກສໍາມະນາກອນ) ໂດຍນໍາໃຊ້ເງື່ອນໄຂຕ່າງໆດັ່ງລຸ່ມນີ້:
   - ຈັດໃຫ້ແຕ່ລະກຸ່ມມີທັງຍິງ ແລະ ຊາຍປົນກັນ;
   - ໃຫ້ແຕ່ລະຂະແໜງການ ຫຼື ພາກສ່ວນດຽວກັນ ສະເໜີໃຫ້ແຍກກັນຢູ່ຄົນລະກຸ່ມ
   - ກຸ່ມໜຶ່ງໃຫ້ມີປະມານ 4-6 ຄົນ
   - ໃຫ້ແຕ່ລະກຸ່ມຈັດຕັ້ງຫົວໜ້າກຸ່ມ
3. ແຕ້ມຕາຕະລາງກຸ່ມໃສ່ເຈ້ຍແຜ່ນໃຫຍ່.
4. ຫຼັງຈາກຈັດກຸ່ມແລ້ວໃຫ້ຂັດເລືອກກຸ່ມສິດເວນປະຈໍາວັນເພື່ອ:
   - ສະຫຼຸບລາຍງານການຝຶກອົບຮົມປະຈໍາວັນ
   - ຕິດຕາມການປະຕິບັດເວລາ ແລະ ລະບຽບຂອງການຝຶກອົບຮົມ

## ຕົວຢ່າງ: ການກໍານົດລະບຽບ ແລະ ເວລາຂອງການຝຶກອົບຮົມຢູ່ເມືອງຈໍາພອນ ແຂວງສະຫວັນນະເຂດ.

## ກ. ການກໍານົດເວລາຝຶກອົບຮົມໃນແຕ່ລະວັນ

- ✓ ເຂົ້າຕອນເຊົ້າ: 08: 30
- ✓ ພັກຜ່ອນ: 09:45-10:00
- ✓ ພັກທ່ຽງ: 12: 00 (ຮັບປະທານອາຫານທ່ຽງ)
- ✓ ເຂົ້າຕອນບ່າຍ: 13: 00
- ✓ ພັກຜ່ອນ: 14:00-14:10
- ✓ ເລີກຕອນແລງ: 15:30

## ຂ. ການກຳນົດລະບຽບໃນເວລາຝຶກອົບຮົມ:

- ✓ ຜູ້ທີ່ມາຊ້າ 10 ນາທີ: ຮ້ອງເພັງ, ຟ້ອນ
- ✓ ສຽງໂທລະສັບດັງ: ຮ້ອງເພັງ, ເລົ່ານິທານ, ນຳພາສ້າງບັນຍາກາດ
- ✓ ຜູ້ເຂົ້າຮ່ວມຕ້ອງໄດ້ປະກອບຄວາມຄິດເຫັນ

**ຕົວຢ່າງການແບ່ງກຸ່ມ:** ແມ່ນໄດ້ຈັດແບ່ງອອກເປັນ 4 ກຸ່ມດັ່ງລຸ່ມນີ້:

| | |
|---|---|
| **ກຸ່ມ 1.**<br>1. ທ່ານ ສຸກສະຫວັດ<br>2. ທ່ານ ແຕ່ງ<br>3. ທ່ານ ສີຕ່ອກ<br>4. ທ່ານນາງ ວອນວິໄລ<br>5. ທ່ານ ຫອມຫວນ | **ກຸ່ມ 2.**<br>1. ທ່ານ ພູທອນ<br>2. ທ່ານນາງ ດວງມາລາ<br>3. ທ່ານ ແອພອນ<br>4. ທ່ານ ເຕ<br>5. ທ່ານນາງ ທອງດຳ<br>6. ທ່ານ ພູວັນ |
| **ກຸ່ມ 3**<br>1. ທ່ານ ນິກອນ<br>2. ທ່ານ ເສດຖາ<br>3. ທ່ານນາງ ມະນີ<br>4. ທ່ານນາງ ພູວຽງ<br>5. ທ່ານນາງ ເຫຼື່ອມ<br>6. ທ່ານ ແກ່ນແກ້ວ | **ກຸ່ມ 4.**<br>1. ທ່ານ ອຸດົມ<br>2. ທ່ານນາງ ຄຳປະເສີດ<br>3. ທ່ານນາງ ດາວເຮືອງ<br>4. ທ່ານ ພູວັງ<br>5. ທ່ານ ພອນ<br>6. ທ່ານນາງ ມະນີວອນ<br>7. ທ່ານ ສົມບັດ |

## ຄ. ການຈັດຕັ້ງກຸ່ມສຶກເວນປະຈຳວັນ

| ລ/ດ | ໜ້າວຽກ | ມື້ 1 | ມື້ 2 | ມື້ 3 | ມື້ 4 | ມື້ |
|---|---|---|---|---|---|---|
| 1 | ຄວບຄຸມເວລາ | 1 | 2 | 3 | 4 | ກຸ່ມ |
| 2 | ສ້າງບັນຍາກາດ | 2 | 3 | 4 | 1 | |
| 3 | ສະຫຼຸບບົດຮຽນແບບສ້າງສັນ | 3 | 4 | 1 | 2 | |
| 4 | ຈັດແຈງຫ້ອງປະຊຸມ (ອະນາໄມ) | 4 | 1 | 2 | 3 | |

# ພາກທີ II: ຄວາມຮູ້ພື້ນຖານກ່ຽວກັບການຜະລິດກະສິກຳອິນຊີ

## ບົດທີ 2.1: ປະຫວັດຄວາມເປັນມາຂອງກະສິກຳອິນຊີ

ນັບຕັ້ງແຕ່ປີ 1920 ເປັນຕົ້ນມາໄດ້ເກີດມີກະແສວິວັດທາງດ້ານວິທະຍາສາດກະສິກຳອິນຊີໄດ້ປະກົດຂຶ້ນ ແລະ ໄດ້ຖືກນຳມາເຜີຍແຜ່ສູ່ສັງຄົມ ເຊິ່ງການຜະລິດກະສິກຳອິນຊີ ແມ່ນເພິ່ນໄດ້ແນໃສ່ການສ້າງໃຫ້ເກີດຄວາມສົມດຸນທາງດ້ານການຄຸ້ມຄອງລະບົບນິເວດວິທະຍາຕ່າງໆຢູ່ໃນລະບົບນິເວດກະສິກຳ (ລະບົບຟາມ). ເຊິ່ງກະແສວິວັດດັ່ງກ່າວນີ້ໄດ້ສ້າງໃຫ້ເກີດມີຄວາມແຕກຕ່າງກັນທາງດ້ານໃດໜຶ່ງ ຖ້າສົມທຽບໃສ່ວິທະຍາສາດກະສິກຳຂອງບັນພະບູລຸດທີ່ເຄີຍສືບທອດກັນມາແຕ່ດຶກດຳບັນ.

ດ້ວຍເຫດນີ້, ຕົກມາໃນຍຸກປະຈຸບັນນີ້ຈຶ່ງເກີດມີຄຳຖາມຂຶ້ນຫຼາຍຄຳຖາມວ່າ ການຜະລິດກະສິກຳອິນຊີຈະເພີ່ມຜົນຜະລິດໄດ້ແທ້ບໍ? ການສົ່ງເສີມກະສິກຳອິນຊີມັນມີຂໍ້ຈຳກັດທາງດ້ານໃດແດ່? ແລະໃນຕົ້ນສັດຕະວັດທີ່ຜ່ານມານີ້ນັກວິທະຍາສາດຫຼາຍຄົນໄດ້ຕັ້ງຄຳຖາມວ່າ ການສົ່ງເສີມຜະລິດກະສິກຳອິນຊີມັນສາມາດລ້ຽງປະຊາກອນຂອງໂລກໄດ້ແທ້ບໍ? ສະນັ້ນ, ຜົນຈາກການທົດລອງຜະລິດກະສິກຳອິນຊີໃນຕອນຕົ້ນສັດຕະວັດທີ່ຜ່ານມານີ້ ຈຶ່ງເຫັນໄດ້ວ່າບໍ່ສາມາດລ້ຽງກຸ້ມປະຊາກອນຂອງໂລກນີ້ໄດ້ ຍ້ອນແນວນັ້ນ, ການຜະລິດກະສິກຳອິນຊີມັນຈຶ່ງມີຄວາມຮຽກຮ້ອງຕ້ອງການສົ່ງເສີມໃຫ້ຊາວກະສິກອນທັງຫຼາຍຈຳເປັນຕ້ອງໄດ້ມີການຮຽນຮູ້ເຕັກນິກວິທະຍາສາດໃໝ່ໆກ່ຽວກັບການຜະລິດກະສິກຳອິນຊີ ແລະ ໃນເວລາດຽວກັນນັ້ນກໍ່ຍັງຕ້ອງການໃຫ້ຊາວກະສິກອນຮູ້ຈັກນຳໃຊ້ ແລະ ໝູນໃຊ້ເຕັກໂນໂລຊີເຂົ້າໃນການຜະລິດກະສິກຳອິນຊີໃຫ້ແທດເໝາະກັບສະພາບຕົວຈິງໃນປະຈຸບັນຂອງແຕ່ລະຂົງເຂດ.

ການຜະລິດກະສິກຳອິນຊີໃນປະຈຸບັນນີ້ ມັນຍັງໄດ້ຮຽກຮ້ອງໃຫ້ມີການຈັດການທີ່ມີລະບົບຄົບຊຸດ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ປະຊາຊົນຜູ້ບໍລິໂພກ ວ່າເຂົາເຈົ້າເຫຼົ່ານັ້ນໄດ້ຮັບການບໍລິໂພກພືດຜັກທີ່ປອດສານພິດຕົກຄ້າງຫຼາຍກ່ວາທີ່ຈະເນັ້ນໜັກໃສ່ການຜະລິດເພື່ອລ້ຽງກຸ່ມປະຊາກອນຢູ່ໃນໂລກໃບນີ້.

ປະຫວັດຄວາມເປັນມາຂອງການສົ່ງເສີມກະສິກຳສະອາດ ແລະ ກະສິກຳອິນຊີຂອງ ສປປ. ລາວ, ໃນຊຸມປີທີ່ຜ່ານມານີ້ພັກ ແລະ ລັດຖະບານລາວ ໄດ້ເຫັນຄວາມສຳຄັນ ແລະ ເລັ່ງໃສ່ການພັດທະນາກະສິກຳແລະປ່າໄມ້ ເປັນບູລິມະສິດຕົ້ນຕໍຢູ່ໃນແຜນການພັດທະນາເສດຖະກິດ-ສັງຄົມ, ຊຶ່ງເຫັນໄດ້ຈາກ 8 ແຜນບຸລິມະສິດຂອງລັດຖະບານກຳນົດໄວ້ໃນແຜນພັດທະນາ ເຊິ່ງໃນນັ້ນຂະແໜງກະສິກຳ ແລະ ປ່າໄມ້ໄດ້ກວມເອົາເຖິງ 6 ແຜນງານບຸລິມະສິດເປັນຕົ້ນ ແມ່ນແຜນງານການຜະລິດສະບຽງອາຫານ, ແຜນງານຜະລິດສິນຄ້າ, ແຜນງານຢຸດຕິການຖາງປ່າເຮັດໄຮ່, ແຜນງານຂະຫຍາຍຊົນລະປະທານ, ແຜນງານຄົ້ນຄວ້າວິໄຈ ແລະ ແຜນງານພັດທະນາບຸກຄະລາກອນ.

ໃນກອງປະຊຸມສະໄໝທີ VIII ຂອງພັກປະຊາຊົນປະຕິວັດລາວໄດ້ຈັດຂຶ້ນໃນປີ 2006 ເພິ່ນໄດ້ກຳນົດແນວທາງນະໂຍບາຍກ່ຽວກັບຂະແໜງກະສິກຳແລະປ່າໄມ້ໃຫ້ຫັນເປັນກະສິກຳສະອາດ ໂດຍເນັ້ນໜັກໃສ່ເຮັດໃຫ້ມີຄວາມຍືນຍົງ, ໝັ້ນຄົງ, ສະອາດ ແລະ ປອດສານພິດພ້ອມທັງຕົ້ນທຶນການຜະລິດຕໍ່າ. ເພື່ອຜັນຂະຫຍາຍນະໂຍບາຍດັ່ງກ່າວນີ້ທາງກົມປູກຝັງໂດຍພາຍໃຕ້ການຊີ້ນຳຂອງກະຊວງກະສິກຳ ແລະ ປ່າໄມ້ ໄດ້ແຍກກະສິກຳສະອາດອອກເປັນ 4 ລະບົບການຜະລິດກະສິກຳເຊັ່ນ: 1). ກະສິກຳທຳມະຊາດແບບຍືນຍົງ, 2). ກະສິກຳທີ່ດີ (ກະສິກຳສະອາດ), 3). ກະສິກຳປອດສານພິດ ແລະ 4). ກະສິກຳອິນຊີ. ການສົ່ງເສີມການຜະລິດກະສິກຳທັງ 4 ລະບົບນີ້ເພິ່ນເອີ້ນວ່າ: ການຜະລິດກະສິກຳສະອາດ. ແຕ່ໃນຄູ່ມືສະບັບນີ້ຈະເວົ້າສະເພາະການຜະລິດກະສິກຳອິນຊີເທົ່ານັ້ນ. ໂດຍທ່ານຜູ້ອ່ານ ແລະ ບັນດາຊາວກະສິກອນຈະ

ໄດ້ທຳຄວາມຮູ້ຈັກ ແລະ ເຂົ້າໃຈທິດສະດີກ່ຽວກັບການຜະລິດກະສິກຳອິນຊີ ແມ່ນຫຍັງກັນແທ້ ແລະມັນມີຄວາມໝາຍຄວາມສຳຄັນແນວໃດຕໍ່ການພັນທະນາເສດຖະກິດສັງຄົມຂອງ ສປປ. ລາວ.

## ອະທິບາຍຫຍໍ້:

ການຮຽນຮູ້ ແລະ ເຂົ້າໃຈແຈ້ງກ່ຽວກັບປະຫວັດຄວາມເປັນມາຂອງການຜະລິດເຂົ້າ ແລະ ພືດຜັກຕ່າງໆໃນຮູບແບບກະສິກຳອິນຊີ ແມ່ນມີຄວາມສຳຄັນຕໍ່ການສຶກສາຮຽນຮູ້ ແລະ ການສ້າງຄວາມເຂົ້າໃຈທີ່ຖືກຕ້ອງໃຫ້ແກ່ຊາວກະສິກອນລາວເວົ້າລວມ ແລະ ເວົ້າສະເພາະແມ່ນກຸ່ມຜະລິດເຂົ້າອິນຊີໃນກຸ່ມບ້ານພັດທະນາເຂດຄັງວຽງ, ເມືອງ ແປກ, ແຂວງ ຊຽງຂວາງ. ທັງນີ້ກໍ່ຍ້ອນວ່າ, ສະພາບການຜະລິດກະສິກຳໃນ ສປປ ລາວ ສ່ວນໃຫຍ່ຊາວກະສິກອນ ແມ່ນເນັ້ນໜັກໃສ່ການຜະລິດເພື່ອໃຫ້ໄດ້ປະລິມານ, ຄວາມສວຍງາມຂອງພືດຜັກ ແລະ ໄດ້ຮັບຜົນຜະລິດທີ່ສູງເທົ່ານັ້ນ ໂດຍບໍ່ໄດ້ຄຳນຶງເຖິງຜົນເສັຍຂອງຜູ້ບໍລິໂພກທີ່ຕາມມາ ເຊິ່ງບັນຫາການນຳໃຊ້ສານເຄມີທີ່ບໍ່ຖືກຕ້ອງຕາມຫຼັກເກນນັ້ນຈະສົ່ງຜົນເສັຍຕໍ່ລະບົບນິເວດວິທະຍາ ແລະສົ່ງຜົນເສັຍອັນມະຫາສານຕໍ່ລະບົບເສດຖະກິດສັງຄົມໃນອະນາຄົດອີກດ້ວຍ.

## ນິຍາມຄຳວ່າລະບົບກະສິກຳອິນຊີ

ສະຫະພັນກະສິກຳອິນຊີນາໆຊາດ ຫຼື ເອີ້ນເປັນພາສາກົນວ່າ (IFOAM) ໄດ້ໃຫ້ນິຍາມກ່ຽວກັບກະສິກຳອິນຊີໄວ້ວ່າ: ລະບົບກະສິກຳອິນຊີແມ່ນໝາຍເຖິງລະບົບການຜະລິດພືດຜັກ ຫຼື ອາຫານທີ່ເນັ້ນໃສ່ໃຫ້ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ດ້ານເສດຖະກິດ ໂດຍແນໃສ່ການອະນຸລັກ, ຮັກສາ, ປັບປຸງບຳລຸງດິນທຳມະຊາດ, ພ້ອມດຽວກັນນັ້ນຍັງແນໃສ່ຮັກສາຄວາມສົມດຸນທາງທຳມະຊາດຂອງພືດ ແລະ ສັດ ຢູ່ໃນລະບົບນິເວດກະສິກຳເປັນຕົ້ນ.

ກະສິກຳອິນຊີແມ່ນມີເປົ້າໝາຍຕົ້ນຕໍ ເພື່ອຫຼຸດຜ່ອນ ແລະ ຫຼີກລ້ຽງການນຳໃຊ້ປັດໃຈການຜະລິດຈາກພາຍນອກທີ່ມີສານພິດເຄມີຕົກຄ້າງ ແລະ ສົ່ງເສີມໃຫ້ຊາວກະສິກອນທ້ອງຖິ່ນຫັນມາໃຊ້ຊັບພະຍາກອນທຳມະຊາດທີ່ຢູ່ໃນທ້ອງຖິ່ນຂອງຕົນ ເພື່ອຍົກສະມັດຕະພາບຂອງການຜະລິດກະສິກຳ, ການປ້ອງກັນ ແລະ ການກຳຈັດສັດຕູພືດກໍ່ເຊັ່ນດຽວກັນ. ດ້ວຍເຫດນີ້, ລະບົບການຜະລິດກະສິກຳອິນຊີເປັນລະບົບທີ່ເນັ້ນໜັກໃສ່ດ້ານຄຸນນະພາບ, ຄວາມປອດໄພຂອງຜູ້ຜະລິດ ແລະຜູ້ບໍລິໂພກ, ເປັນມິດກັບສິ່ງແວດລ້ອມ ພ້ອມທັງຮັກສາລະບົບນິເວດວິທະຍາພາຍໃນຟາມຂອງຊາວກະສິກອນນັ້ນເອງ.

ສັງລວມນິຍາມໂດຍຫຍໍ້ທີ່ຂັດມາຈາກຂໍ້ຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້ ປີ 2011 ວ່າດ້ວຍມາດຖານກະສິກຳອິນຊີ ຂອງມາດຕາທີ 5 ເພິ່ນໄດ້ໃຫ້ນິຍາມກະສິກຳອິນຊີໄວ້ວ່າ: *"ກະສິກຳອິນຊີ (Organic Agriculture) ໝາຍເຖິງລະບົບການຜະລິດທີ່ບໍ່ມີການນຳໃຊ້ຝຸ່ນເຄມີ, ສານເຄມີເພື່ອປ້ອງກັນ ແລະ ກຳຈັດສັດຕູພືດ, ເປັນລະບົບການຜະລິດທີ່ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານກະສິກຳອິນຊີ"*

## ຈຸດປະສົງ:

- ✓ ເພື່ອສອນໃຫ້ຊາວກະສິກອນ ແລະ ຜູ້ທີ່ສົນໃຈຢາກສຶກສາວິທີການປູກພືດຜັກອິນຊີ ຫຼື ການປູກເຂົ້າອິນຊີນັ້ນມີຄວາມເຂົ້າໃຈແຈ້ງ ກ່ຽວກັບຫຼັກການພື້ນຖານຕ່າງໆ ຂອງການຜະລິດກະສິກຳອິນຊີທີ່ປອດສານພິດຕົກຄ້າງ
- ✓ ເພື່ອສົ່ງເສີມໃຫ້ຊາວກະສິກອນໃນກຸ່ມບ້ານພັດທະນາເຂດຄັງວຽງ, ເມືອງ ແປກ, ແຂວງ ຊຽງຂວາງ ໄດ້ຮັບຮູ້ ແລະ ເຂົ້າໃຈຫຼັກການຕ່າງໆ ໃນການຜະລິດເຂົ້າປອດສານພິດ ຫຼື ວ່າກະສິກຳອິນຊີ

✓ ເພື່ອຊ່ວຍໃຫ້ຊາວກະສິກອນເຂົ້າໃຈແຈ້ງກ່ຽວກັບການຄຸ້ມຄອງການຜະລິດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນຂອງກົດໝາຍ ວ່າດ້ວຍການຜະລິດກະສິກຳຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ໄດ້ວາງອອກເຊິ່ງແນວທາງນະໂຍບາຍໃນຕໍ່ໜ້ານີ້ ເພິ່ນຈະໄດ້ເນັ້ນໜັກໃສ່ການຜະລິດກະສິກຳສະອາດ.

## ອຸປະກອນ:

- ບົດສະເໜີ (Presentation PowerPoint)
- ເຈັ້ຍແຜ່ນໃຫຍ່
- ເຈັ້ຍ A4
- ບິກເຟີດ
- ເຈັ້ຍບັດຄຳ
- ສະກັອດ
- ກະດານ

## ເວລາທີ່ໃຊ້:

✓ ໃຊ້ເວລາ 30 ນາທີ ໃນການສະເໜີບົດ (Presentation PowerPoint)

✓ ໃຊ້ເວລາ 30 ນາທີ ເພື່ອໃຫ້ນັກສຳມະນາກອນໄດ້ຖາມ ແລະ ຕອບຄຳຖາມ

## ຂັ້ນຕອນ:

### ອະທິບາຍຈຸດປະສົງໃຫ້ຜູ້ເຂົ້າຮ່ວມຮັບຮູ້:

1. ແຈກຢາຍເອກະສານຕ່າງໆທີ່ກ່ຽວຂ້ອງກັບບົດຮຽນໃຫ້ແກ່ຜູ້ເຂົ້າຮ່ວມ.
2. ຫຼັງຈາກແຈກຢາຍເອກະສານທີ່ກ່ຽວຂ້ອງກັບບົດຮຽນ ກໍ່ໃຫ້ເວລາຜູ້ເຂົ້າຮ່ວມສຶກສາເອກະສານ 5-10 ນາທີຕໍ່ຈາກນັ້ນຄູຝຶກກໍ່ຈຶ່ງເລີ່ມຕົ້ນອະທິບາຍບົດຮຽນ

# ບົດຮຽນ 2.2 ກະສິກຳອິນຊີ ແມ່ນຫຍັງ ?

## ອະທິບາຍຫຍໍ້

✓ ກະສິກຳອິນຊີ: ແມ່ນບອນບໍ່ແມ່ນການນຳໃຊ້ສານເຄມີເປັນຫຼັກໃນການປັບປຸງດິນ, ການເພີ່ມປະລິມານຜົນຜະລິດ ແລະ ການເຮັດໃຫ້ຕົ້ນພືດມີຄວາມແຂງແຮງ ທົນທານ.

✓ ກະສິກຳອິນຊີແມ່ນລະບົບການຜະລິດທີ່ມີການປະສົມປະສານໃນເຊີງອະນຸລັກສິ່ງແວດລ້ອມເປັນຕົ້ນ: ດິນ, ນ້ຳ ອາກາດ, ລະບົບນິເວດວິທະຍາ, ປອດໄພສຳລັບຜູ້ຜະລິດ ແລະ ຜູ້ຊົມໃຊ້.

✓ ການຜະລິດກະສິກຳອິນຊີຈຸດໜັກແມ່ນຈະເນັ້ນໃສ່ວັດຖຸທີ່ມີຢູ່ໃນຟາມ ຫຼື ໃນຂອບເຂດເນື້ອທີ່ການຜະລິດຂອງຕົນເອງເປັນຕົ້ນ: ມູນສັດ, ຫຍ້າແຫ້ງ, ໃບໄມ້ແຫ້ງ, ເຟືອງ, ຂີ້ແກບ, ຂີ້ກະເດືອນ, ເຄືອເຂົາຣໍ, ຂີ້ມກະເດົາ ເສດພືດ ຫຼື ເສດໝາກໄມ້ ເຫຼົ່ານີ້ເປັນຕົ້ນ.

## ນິຍາມຂອງລະບົບກະສິກຳອິນຊີ:

ສະຫະພັນກະສິກຳອິນຊີນາໆຊາດ (IFOAM) ໄດ້ໃຫ້ຄວາມໝາຍຂອງລະບົບກະສິກາອິນຊີວ່າ: ລະບົບການຜະລິດກະສະກຳອິນຊີ ແມ່ນລະບົບການຜະລິດສະບຽງອາຫານທີ່ເນັ້ນໜັກໃສ່ຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ດ້ານເສດຖະກິດສັງຄົມ ໂດຍເພິ່ນໄດ້ເລັ່ງໃສ່ການບຳລຸງຮັກສາດິນປູກຝັງ, ຮັກສາລະບົບຄວາມສົມດູນທາງດ້ານສິ່ງແວດລ້ອມໂດຍທຳມະຊາດຂອງພືດ, ສັດ ແລະນິເວດກະສິກຳຕ່າງໆ. ກະສິກຳອິນຊີມີເປົ້າໝາຍເພື່ອຫຼຸດຜ່ອນ ແລະ ຫຼີກລ້ຽງການນຳໃຊ້ປັດໄຈການຜະລິດຈາກພາຍນອກ ໂດຍສົ່ງເສີມໃຫ້ຊາວກະສິກອນ ຫຼື ຊາວນາຫັນມາໃຊ້ຊັບພະຍາກອນທຳມະຊາດທີ່ຫາໄດ້ງ່າຍທີ່ມີຢູ່ພາຍໃນທ້ອງຖິ່ນມາຜະລິດເປັນຝຸ່ນບົ່ມເພື່ອປັບປຸງ ແລະບຳລຸງດິນເພື່ອແນໃສ່ຍົກສູງສະມັດຕະພາບຂອງການຜະລິດກະສິກຳເປັນຕົ້ນຕໍ ແລະ ໃນເວລາດຽວກັນນັ້ນ ກໍ່ຍັງສົ່ງເສີມໃຫ້ຊາວກະສິກອນຫາວິທີປ້ອງກັນພ້ອມທັງກຳຈັດສັດຕູພືດດ້ວຍລະບົບອິນຊີວັດຖຸ. ສະນັ້ນ, ລະບົບດັ່ງກ່າວນີ້ສ່ວນໃຫຍ່ແລ້ວເພິ່ນເນັ້ນໜັກໃສ່ການຄວບຄຸມຄຸນນະພາບ, ຄວາມປອດໄພໃນການບໍລິໂພກພືດຜັກຕ່າງໆ ແລະ ເປັນມິດຕໍ່ສິ່ງແວດລ້ອມຢູ່ພາຍໃນຟາມຂອງຊາວກະສິກອນເອງ.

## ຈຸດປະສົງ:

✓ ເພື່ອສອນໃຫ້ຊາວກະສິກອນ ແລະ ຜູ້ທີ່ສົນໃຈຢາກສຶກສາວິທີການປູກພືດຜັກອິນຊີ ຫຼື ການປູກເຂົ້າອິນຊີນັ້ນມີຄວາມເຂົ້າໃຈຫຼັກການພື້ນຖານຕ່າງໆ ກ່ຽວກັບການຜະລິດກະສິກຳອິນຊີທີ່ປອດສານພິດຕົກຄ້າງ

✓ ເພື່ອສົ່ງເສີມໃຫ້ຊາວກະສິກອນໃນກຸ່ມບ້ານພັດທະນາເຂດຄັງວຽງ, ເມືອງ ແປກ, ແຂວງ ຊຽງຂວາງ ໄດ້ຮັບຮູ້ ແລະ ເຂົ້າໃຈຫຼັກການຕ່າງໆໃນການຜະລິດເຂົ້າປອດສານພິດ ຫຼື ວ່າກະສິກຳອິນຊີ

✓ ເພື່ອຊ່ວຍໃຫ້ຊາວກະສິກອນເຂົ້າໃຈແຈ້ງ ກ່ຽວກັບການຄຸ້ມຄອງການຜະລິດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນຂອງກົດໝາຍວ່າດ້ວຍການຜະລິດກະສິກຳຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ໄດ້ວາງອອກເຊິ່ງແນວທາງນະໂຍບາຍໃນຕໍ່ໜ້ານີ້ ເພິ່ນຈະໄດ້ເນັ້ນໜັກໃສ່ການຜະລິດກະສິກຳສະອາດ.

## ອຸປະກອນ:

- ບົດສະເໜີ (Presentation PowerPoint)
- ເຈັ້ຍແຜ່ນໃຫຍ່
- ເຈັ້ຍ A4
- ບິກເຟີດ
- ເຈັ້ຍບັດຄຳ

- ສະກ໋ອດ
- ກະດານ

## ເວລາທີ່ໃຊ້:

- ✓ ໃຊ້ເວລາ 45 ນາທີ ໃນການສະເໜີບົດ (Presentation PowerPoint)
- ✓ ໃຊ້ເວລາ 25 ນາທີ ເພື່ອໃຫ້ນັກສຳມະນາກອນໄດ້ຖາມ ແລະ ຕອບຄຳຖາມ

## ຂັ້ນຕອນ:

## ອະທິບາຍຈຸດປະສົງໃຫ້ຜູ້ເຂົ້າຮ່ວມຮັບຮູ້:

3. ແຈກຢາຍເອກະສານຕ່າງໆ ທີ່ກ່ຽວຂ້ອງກັບບົດຮຽນໃຫ້ແກ່ຜູ້ເຂົ້າຮ່ວມ.
4. ຫຼັງຈາກແຈກຢາຍເອກະສານທີ່ກ່ຽວຂ້ອງກັບບົດຮຽນແລ້ວ ກໍ່ໃຫ້ເວລາຜູ້ເຂົ້າຮ່ວມໄດ້ສຶກສາເອກະສານ 5-10 ນາທີຕໍ່ຈາກນັ້ນຄູຝຶກກໍ່ເລີ່ມຕົ້ນອະທິບາຍບົດຮຽນ

## ຫຼັກການລວມ ຂອງການຜະລິດກະສິກຳອິນຊີ

1. ຮັກສາ ແລະ ເພີ່ມຄວາມອຸດົມສົມບູນໃຫ້ດິນທັງປະຈຸບັນ ແລະ ໄລຍະຍາວ
2. ຮັກສາວົງຈອນຊີວະພາບພາຍໃນຟາມ, ໂດຍສະເພາະແມ່ນວົງຈອນທາດອາຫານພືດ
3. ເພີ່ມທາດເສັ່ງ (N) ໃນດິນໂດຍນຳໃຊ້ພືດຕະກຸນຖົ່ວ ຫຼື ຝຸ່ນຊີວະພາບ
4. ນຳໃຊ້ຊີວະວິທະຍາປ້ອງກັນແທນທີ່ຈະເປັນການແກ້ໄຂ
5. ການປູກພືດ ແລະ ລ້ຽງສັດຫຼາຍຊະນິດ ທີ່ເໝາະສົມກັບສະພາບທ້ອງຖິ່ນໄປພ້ອມໆກັນ
6. ສະຖານທີ່ຕ້ອງເໝາະສົມ
7. ບໍ່ນຳໃຊ້ສານເຄມີເດັດຂາດ
8. ຕ້ອງມີການກວດກາຈາກເຈົ້າໜ້າທີ່ໆກ່ຽວຂ້ອງຢ່າງເປັນປະຈຳ
9. ຕ້ອງໄດ້ຮັບການຢັ້ງຢືນຢ່າງເປັນທາງການຈາກຂະແໜງການທີ່ກ່ຽວຂ້ອງ
10. ຫ້າມນຳໃຊ້ວິສະວະພັນທຸກຳ ແລະ ຜະລິດຕະພັນຂອງມັນ

## ເຮັດແນວໃດເພື່ອຮັບປະກັນຄຸນະພາບໃນການຜະລິດກະສິກຳອິນຊີ

ເພື່ອຢາກໃຫ້ຊາວກະສິກອນລາວຜະລິດກະສິກຳອິນຊີໃຫ້ມີຄຸນະພາບດີຂຶ້ນນັ້ນ ທາງສະມາຄົມພັດທະນາຊຸມຊົນ ແລະ ສິ່ງແວດລ້ອມ ຈຶ່ງມີຄວາມຈຳເປັນຢ່າງຍິ່ງຕ້ອງມີການຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນ ຫຼື ຜູ້ທີ່ສົນໃຈຢາກຜະລິດກະສິກຳອິນຊີໃຫ້ເຂົ້າໃຈແຈ້ງກ່ຽວກັບກົດລະບຽບ ຫຼື ຂໍ້ກຳນົດຕ່າງໆໃນການຜະລິດ, ເຕັກນິກການຜະລິດ ແລະ ມາດຕະຖານການຜະລິດກະສິກຳອິນຊີ. ແຕ່ສິ່ງທີ່ດີທີ່ສຸດແມ່ນຕ້ອງໄດ້ເອົາໃຈໃສ່ຝຶກອົບຮົມໃຫ້ສະມາຊິກຜູ້ທີ່ສົນໃຈ ແລະ ຜູ້ສະໝັກເຂົ້າມາເປັນສະມາຊິກຜະລິດກະສິກຳອິນຊີນັ້ນຕ້ອງມີຄວາມເຂົ້າໃຈດີກ່ຽວກັບຂໍ້ກຳນົດ ແລະ

ມາດຕະຖານການຜະລິດກະສິກຳອິນຊີຂອງລັດຖະບານແຫ່ງ ສປປ.ລາວ ທີ່ໄດ້ວາງອອກ ເຊິ່ງມີລາຍລະອຽດດັ່ງຕໍ່ລົງໄປນີ້ຄື:

1. ສະມາຊິກຕ້ອງໄດ້ເອົາໃຈໃສ່ບຳລຸງດິນ ໃຫ້ສອດຄ່ອງກັບລະບົບກະສິກຳອິນຊີຢ່າງສະໝໍ່າສະເໝີ
2. ສະມາຊິກແຕ່ລະຄົນຕ້ອງໄດ້ຮຽນຮູ້ເຕັກນິກໃນການເຮັດຝຸ່ນບົ່ມ ແລະ ນ້ຳສະກັດຊີວະພາບ
3. ສະມາຊິກແຕ່ລະຄົນຕ້ອງໄດ້ມີການວາງແຜນ ການນຳໃຊ້ຝຸ່ນອິນຊີໃຫ້ສອດຄ່ອງກັບພືດຜັກ ແລະ ລະບົບການຜະລິດຕ່າງໆ
4. ສະມາຊິກແຕ່ລະຄົນຕ້ອງໄດ້ຮຽນຮູ້ວິທີການປ້ອງກັນ ແລະ ກຳຈັດສັດຕູພືດແບບກະສິກຳອິນຊີ
5. ສະມາຊິກຕ້ອງໄດ້ຮຽນຮູ້ວິທີການບໍລິຫານຈັດການຕາມຫຼັກການຂອງການຜະລິດກະສິກຳອິນຊີ
6. ສະມາຊິກແຕ່ລະຄົນຕ້ອງໄດ້ມີການວາງແຜນເຮັດແນວປ້ອງກັນ (ສ້າງແນວກັກກັນພືດ ເພື່ອປ້ອງກັນລະຫວ່າງການປູກພືດອິນຊີ ແລະ ບໍ່ແມ່ນອິນຊີ)
7. ສະມາຊິກແຕ່ລະຄົນຕ້ອງມີຄວາມເຂົ້າໃຈແຈ້ງກ່ຽວກັບມາດຕະຖານ, ຂໍ້ກຳນົດ, ກົດລະບຽບຕ່າງໆເປັນຢ່າງດີກ່ຽວກັບການຜະລິດກະສິກຳອິນຊີ

ອີກປະການໜຶ່ງທີ່ສຳຄັນ ແລະ ຂາດບໍ່ໄດ້ນັ້ນກໍ່ຄືການສະໜອງຂໍ້ມູນຂ່າວສານທາງດ້ານປັດໄຈການຜະລິດນັ້ນກໍ່ແມ່ນມີຄວາມສຳຄັນຫຼາຍຕໍ່ກັບການຜະລິດກະສິກຳອິນຊີ ເຊິ່ງເປັນປັດໄຈອັນພື້ນຖານໃຫ້ແກ່ການຜະລິດເຂົ້າອິນຊີປະກອບມີດັ່ງນີ້ຄື:

- ແນວພັນທີ່ມີຄຸນະພາບດີ ແລະ ຖືກຕ້ອງຕາມມາດຕະຖານຂອງລະບົບການຜະລິດກະສິກຳອິນຊີ
- ຝຸ່ນອິນຊີທີ່ຈະນຳມາບຳລຸງດິນໃຫ້ໄດ້ຕາມມາດຕະຖານຂອງລະບົບການຜະລິດກະສິກຳອິນຊີ
- ເຊື້ອຊີວະວິທະຍາ ແລະ ສານອິນຊີສຳລັບໃຊ້ໃນການປ້ອງກັນ ແລະ ກຳຈັດສັດຕູພືດທີ່ລະບາດໃນການປູກພືດຊະນິດຕ່າງໆຂອງຊາວກະສິກອນ
- ພາຊະນະບັນຈຸຜົນຜະລິດ ເຊິ່ງໃນອະນາຄົດຫົວໜ້າກຸ່ມຜູ້ຜະລິດຈະໄດ້ລົງຕິດຕາມ, ກວດກາກ່ຽວກັບແຫຼ່ງທີ່ມາຂອງວັດຖຸ ແລະ ປັດໄຈການຜະລິດ ໂດຍສະເພາະແລ້ວແມ່ນມູນສັດທີ່ນຳມາໃຊ້ໃນການເຮັດຝຸ່ນບົ່ມນັ້ນແມ່ນສະມາຊິກແຕ່ລະຄົນນຳມາຈາກໃສ ມັນສອດຄ່ອງກັບຫຼັກການຜະລິດກະສິກຳອິນຊີ ຫຼື ບໍ່

## ຜົນປະໂຫຍດຂອງການເຮັດກະສິກຳອິນຊີ ແມ່ນຫຍັງ ?

ອີງໃສ່ປະສົບປະການຕົວຈິງແລ້ວພົບວ່າການປູກພືດກະສິກຳອິນຊີ ແມ່ນມີປະໂຫຍດຫຼາຍທີ່ສຸດຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມຕ່າງໆ ທີ່ຢູ່ອ້ອມຂ້າງຟາມຂອງຊາວກະສິກອນ. ນອກຈາກນັ້ນ, ຍັງຈະສົ່ງຜົນດີຕໍ່ການຜະລິດເປັນສິນຄ້າໃນອະນາຄົດ ເພາະວ່າຜູ້ບໍລິໂພກສ່ວນໃຫຍ່ຢູ່ໃນບັນດາຕົວເມືອງໃຫຍ່ນັ້ນ ເຂົາໄດ້ຫັນມາເອົາໃຈໃສ່ທາງດ້ານການຮັກສາສຸຂະພາບ ແລະ ສິ່ງແວດລ້ອມນັບມື້ນັບຫຼາຍຂຶ້ນ. ດ້ວຍເຫດນີ້, ການປູກພືດອິນຊີ ຫຼື ວ່າການສົ່ງເສີມໃຫ້ຊາວກະສິກອນເອົາໃຈໃສ່ທາງດ້ານກະສິກຳສະອາດປາດສະຈາກສານພິດຕົກຄ້າງນັ້ນ ແມ່ນມີປະໂຫຍດຫຼາຍທີ່ສຸດຕໍ່ຊາວກະສິກອນ ແລະ ຜູ້ບໍລິໂພກພືດຜັກນັ້ນເອງພ້ອມທັງເປັນມິດຕໍ່ສິ່ງແວດລ້ອມອີກດ້ວຍ.

## ການຜະລິດເຂົ້າອິນຊີ

ການຜະລິດເຂົ້າອິນຊີຢູ່ໃນ ສປປ. ລາວ ໃນປະຈຸບັນນີ້ຍັງມີການສົ່ງເສີມການຜະລິດຂະໜາດນ້ອຍ ແລະ ຍັງເປັນການຜະລິດທີ່ກະແຈກກະຈາຍ. ເຊິ່ງຕົກມາຮອດປະຈຸບັນ ທາງພາກລັດແມ່ນໄດ້ໃຫ້ຄວາມສໍາຄັນໃນການຜະລິດເຂົ້າ ແລະ ພືດຜັກອິນຊີເປັນພິເສດ ແຕ່ໃນການສົ່ງເສີມຂອງໂຄງການພັດທະນາຕ່າງໆ ແລະ ພາກເອກະຊົນຕະຫຼອດຮອດຊາວກະສິກອນເອງນັ້ນ ຍັງບໍ່ທັນໄດ້ເອົາໃຈໃສ່ໃນການພັດທະນາ ແລະ ສົ່ງເສີມການຜະລິດເຂົ້າອິນຊີເທົ່າທີ່ຄວນຢູ່ໃນໄລຍະຜ່ານມານັ້ນ.

ສະນັ້ນ, ອີງໃສ່ຫຼັກການທາງດ້ານກະສິກໍາອິນຊີແລ້ວ ມັນຈໍາເປັນຕ້ອງໄດ້ມີການຢັ້ງຢືນມາດຕະຖານ ເບິ່ງແລ້ວແມ່ນຍັງມີຄວາມຫຍຸ້ງຍາກຫຼາຍສໍາລັບຊາວກະສິກອນລາວ ເພາະວ່າການກວດກາ ແລະ ຢັ້ງຢືນມາດຕະຖານແຕ່ລະຄັ້ງມັນຈໍາເປັນຕ້ອງໄດ້ມີຄ່າໃຊ້ຈ່າຍຕ່າງໆເປັນຈໍານວນຫຼວງຫຼາຍ. ດ້ວຍເຫດນີ້, ການຢັ້ງຢືນເປັນລາຍບຸກຄົນນັ້ນຍິ່ງບໍ່ສາມາດອອກຄ່າໃຊ້ຈ່າຍນັ້ນໄດ້ ເພື່ອໃຫ້ມີການຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆນັ້ນລົງ ໃນເວລາທີ່ມີການກວດກາຢັ້ງຢືນ ຈຶ່ງຈໍາເປັນຕ້ອງໄດ້ມີການລວມຕົວຂອງກຸ່ມຜູ້ຜະລິດນັ້ນເຂົ້າມາຜະລິດເປັນກຸ່ມກ້ອນ ແລະ ກໍ່ມີການອອກໃບຢັ້ງຢືນຮັບຮອງເປັນກຸ່ມຈາກພາກສ່ວນທີ່ກ່ຽວຂ້ອງ. ດັ່ງນັ້ນ, ການຂໍອອກໃບຢັ້ງຢືນມາດຕະຖານເປັນກຸ່ມ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ສ້າງລະບົບການຄວບຄຸມພາຍໃນ (ICS) ເພື່ອຄວບຄຸມ ແລະ ເບິ່ງແຍງລະບົບການຜະລິດໃຫ້ເປັນໄປຕາມມາດຕະຖານຂອງການຜະລິດກະສິກໍາອິນຊີ ຫຼື ການຜະລິດເຂົ້າອິນຊີ.

## ຈຸດປະສົງຕົ້ນຕໍຂອງການສ້າງຕັ້ງກຸ່ມຜະລິດເຂົ້າອິນຊີ:

ແມ່ນເພື່ອແນໃສ່ການອໍານວຍຄວາມສະດວກ ແລະ ການສົ່ງເສີມການຜະລິດເຂົ້າອິນຊີ ເພື່ອໃຫ້ສະມາຊິກກຸ່ມປະຕິບັດຕາມມາດຕະຖານກະສິກໍາອິນຊີ ເຊິ່ງຮັບປະກັນທາງດ້ານຄຸນະພາບ ແລະ ປະລິມານຂອງຜົນຜະລິດກະສິກໍາອິນຊີ. ເພື່ອສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການສົ່ງເສີມຄວາມຮູ້, ຄວາມສາມາດກ່ຽວກັບການຜະລິດເຂົ້າອິນຊີໃຫ້ແກ່ກຸ່ມຜູ້ຜະລິດ ຫຼື ຜູ້ທີ່ສົນໃຈຢາກສຶກສາຮຽນຮູ້ວິທີການຜະລິດເຂົ້າ ແລະ ກະສິກໍາອິນຊີແບບໃໝ່ ພ້ອມທັງການສ້າງຕັ້ງ ແລະ ບໍລິຫານຄຸ້ມຄອງລະບົບກວດສອບພາຍໃນທີ່ມີປະສິດທິພາບ ແລະ ຖືກຕ້ອງສອດຄ່ອງກັບລະບົບການຜະລິດກະສິກໍາອິນຊີ.

# ພາກທີ III: ໂຄງຮ່າງການຈັດຕັ້ງກຸ່ມ

## ບົດທີ 3.1: ສິດ ແລະ ໜ້າທີ່ຂອງກຸ່ມ

ໂຄງຮ່າງການຈັດຕັ້ງກຸ່ມໂດຍທົ່ວໄປແລ້ວຈະປະກອບດ້ວຍ ຫົວໜ້າກຸ່ມ, ຮອງກຸ່ມ, ຄະນະກຸ່ມ ແລະ ສະມາຊິກກຸ່ມ ທີ່ມີໜ້າທີ່ຮັບຜິດຊອບແຕກຕ່າງກັນເຊັ່ນ:

- ວຽກງານກວດກາ ແລະ ກວດສອບພາຍໃນ
- ວຽກງານຄຸ້ມຄອງລະບົບ ແລະ ຄຸມຄອງຄຸນະພາບ
- ວຽກງານວິຊາການທາງດ້ານການສົ່ງເສີມການຜະລິດ
- ວຽກງານການສົ່ງເສີມການຕະຫຼາດ ແລະ ກອງທຶນ

## ໂຄງຮ່າງການຈັດຕັ້ງກຸ່ມ



## ພາລະບົດບາດ ແລະ ຄວາມຮັບຜິດຊອບ:

| ລ/ດ | ຕຳແໜ່ງ | ພາລະບົດບາດ ແລະ ຄວາມຮັບຜິດຊອບ | ໝາຍເຫດ |
|---|---|---|---|
| 1 | ຫົວໜ້າກຸ່ມ | • ຊີ້ນຳລວມ<br>• ອະນຸມັດ ແລະ ຮັບຮອງລະບົບການຄຸ້ມຄອງພາຍໃນ<br>• ເຊັນຮັບຮອງເອກະສານຕ່າງໆ<br>• ເຊັນອະນຸມັດລາຍຮັບ-ລາຍຈ່າຍ | |
| 2 | ຮອງຫົວໜ້າຜູ້ທີ 1 | • ເປັນຜູ້ຊ່ວຍຫົວໜ້າ<br>• ພັດທະນາລະບົບການຕິດຕາມ, ກວດກາ ແລະ ຄຸ້ມຄອງພາຍໃນ<br>• ສົ່ງເສີມການຜະລິດເຂົ້າອິນຊີ (ພືດອິນຊີ)<br>• ປະສານງານກັບໜ່ວຍງານກວດກາຢັ້ງຢືນຈາກພາຍນອກ<br>• ສົ່ງເສີມການຜະລິດຝຸ່ນບົ່ມ<br>• ເກັບກຳຂໍ້ມູນ ແລະ ເອກະສານກ່ຽວກັບແຜນວາດ, ທີ່ຕັ້ງ, ປະຫວັດຂອງຟາມ ແລະ ຂຶ້ນທະບຽນ<br>• ແຈ້ງຜົນການຢັ້ງຢືນໃຫ້ແກ່ສະມາຊິກກຸ່ມ | |
| 3 | ຮອງຫົວໜ້າຜູ້ທີ 2 ຫຼື ຄະນະ | • ຕິດຕາມ, ຊີ້ນຳວຽກງານສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ແກ່ກຸ່ມໃນການຜະລິດກະສິກຳອິນຊີ<br>• ຮັບຜິດຊອບຊີ້ນຳວຽກງານການຕະຫຼາດ ແລະ ກອງທຶນ<br>• ປະສານງານ ແລະ ພົວພັນກ່ຽວກັບການສະໜອງເລື່ອງປັດໄຈການຜະລິດຕ່າງໆ<br>• ປະສານງານກັບໜ່ວຍງານລັດທີ່ກ່ຽວຂ້ອງ ແລະ ລະດົມທຶນ | |
| 4 | ວິຊາການກວດກາ/ ກວດສອບລະບົບຄຸ້ມຄອງພາຍໃນ | • ສ້າງ ແລະ ຈັດລະບົບເອກະສານຂໍ້ມູນກ່ຽວກັບສະມາຊິກ<br>• ປຸກຈິດສຳນຶກ, ເຜີຍແຜ່ບັນດາຂໍ້ກຳນົດ ແລະນິຕິກຳກ່ຽວກັບກະສິກຳອິນຊີ (ການຜະລິດເຂົ້າອິນຊີ)<br>• ບັນທຶກຕິດຕາມ, ກວດກາລະບົບການຄຸ້ມຄອງພາຍໃນຂອງສະມາຊິກກຸ່ມ<br>• ກວດກາຕິດຕາມຟາມ ແລະ ບັນທຶກເກັບກຳຂໍ້ມູນກ່ຽວກັບການປູກ ການລ້ຽງສັດຂອງສະມາຊິກຢູ່ພາຍໃນຟາມເຂົາເຈົ້າ | |
| 5 | ສົ່ງເສີມການຜະລິດ | • ປະເມີນຄວາມຕ້ອງການຝຶກອົບຮົມໃຫ້ແກ່ສະມາຊິກ<br>• ແນະນຳເຕັກນິກຕ່າງໆກ່ຽວກັບການເຮັດຝຸ່ນບົ່ມ, ນ້ຳໝັກຊີວະພາບ | |

| | | | |
|---|---|---|---|
| | | ຕະຫຼອດຮອດເຕັກນິກອື່ນໆກ່ຽວກັບການຜະລິດກະສິກຳອິນຊີ<br>• ຈັດຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງທາງດ້ານການຜະລິດ | |
| 6 | ສົ່ງເສີມການຕະຫຼາດ/ ກອງທຶນ | • ສຶກສາຄວາມຕ້ອງການ ແລະ ປະເມີນຄວາມຕ້ອງການທາງດ້ານການຕະຫຼາດ<br>• ເກັບກຳຂໍ້ມູນຜົນຜະລິດ ແລະ ຜົນເສັຍຫາຍຕ່າງໆຂອງສະມາຊິກໃນເວລາເກີດໄພພິບັດ ແລະ ໂລກລະບາດ<br>• ເກັບກຳຂໍ້ມູນດ້ານການຕະຫຼາດ<br>• ພົວພັນ ແລະ ຊອກຫາຕະຫຼາດ ນັບທັງພາຍໃນ ແລະ ພາຍນອກປະເທດ<br>• ແຈ້ງລາຄາການຊື້-ການຂາຍໃຫ້ແກ່ສະມາຊິກປະຈຳວັນ, ປະຈຳອາທິດ ແລະ ປະຈຳເດືອນ ຫຼື ປີ<br>• ຮັບຜິດຊອບກອງທຶນກຸ່ມ | |
| 7 | ວິຊາການຄຸ້ມຄອງຄຸນະ ພາບ | • ຕິດຕາມ, ກວດກາ ແລະ ຄຸ້ມຄອງຄຸນະພາບການຜະລິດ<br>• ເຜີຍແຜ່ເຕັກນິກການຮັກສາຄຸນະພາບ ຫຼັງການເກັບກ່ຽວ<br>• ອອກໃບຢັ້ງຢືນຮັບຮອງຄຸນະພາບເບື້ອງຕົ້ນລະດັບກຸ່ມ | |

# ພາກທີ IV: ລະບົບການຄຸ້ມຄອງພາຍໃນ:

## ບົດຮຽນທີ 4.1: ລະບົບການຄຸ້ມຄອງພາຍໃນແມ່ນຫຍັງ?

### ຄໍານິຍາມ:

ລະບົບການຄຸ້ມຄອງພາຍໃນແມ່ນລະບົບການກວດກາ ແລະ ກວດສອບພາຍໃນ ເຊິ່ງສ້າງຕັ້ງຂຶ້ນມາເພື່ອຕິດຕາມສະມາຊິກໃຫ້ປະຕິບັດຕາມຫຼັກການຜະລິດກະສິກໍາອິນຊີຢ່າງເຂັ້ມງວດ.

### ຈຸດປະສົງ:

ຈຸດປະສົງຂອງການສ້າງລະບົບນີ້ຂຶ້ນມາ ກໍ່ເພື່ອໃຫ້ມີບ່ອນອີງໃນການກວດກາ, ຕິດຕາມຜູ້ຜະລິດກະສິກໍາແບບອິນຊີ ໃຫ້ປະຕິບັດຕາມລະບຽບການຜະລິດກະສິກໍາແບບອິນຊີຢ່າງເຂັ້ມງວດ ແລະເຄັ່ງຄັດ ເພື່ອໃຫ້ຜົນຜະລິດຕ່າງໆນັ້ນມີມາດຕະຖານດຽວກັນທັງໝົດທຸກໆຄົນທີ່ເປັນສະມາຊິກກຸ່ມ.

### ອຸປະກອນ:

- ບົດສະເໜີ (Presentation PowerPoint)
- ເຈັ້ຍແຜ່ນໃຫຍ່
- ເຈັ້ຍ A4
- ບິກເຟີດ
- ເຈັ້ຍບັດຄໍາ
- ສະກ໋ອດ
- ກະດານ

### ເວລາທີ່ໃຊ້:

- ✓ ໃຊ້ເວລາ 45 ນາທີ ໃນການສະເໜີບົດ (Presentation PowerPoint)
- ✓ ໃຊ້ເວລາ 30 ນາທີ ເພື່ອໃຫ້ສໍາມະນາກອນໄດ້ຖາມ ແລະ ຕອບຄໍາຖາມ

### ເນື້ອໃນບົດຮຽນ

### ຂັ້ນຕອນຕ່າງໆຂອງລະບົບການຄຸ້ມຄອງພາຍໃນມີຫຍັງແດ່?

ລະບົບການຄຸ້ມຄອງພາຍໃນຂອງກຸ່ມຜູ້ຜະລິດກະສິກໍາອິນຊີ ຫຼື ວ່າເຂົ້າອິນຊີນັ້ນຈະປະກອບມີ 4 ຂັ້ນຕອນດ້ວຍກັນຄື:

1. ການສ້າງລະບຽບ ແລະ ຂໍ້ກໍານົດພາຍໃນຂອງກຸ່ມຜູ້ຜະລິດກະສິກໍາອິນຊີ
2. ການຮັບສະໝັກສະມາຊິກ ແລະ ການກວດກາການຄຸ້ມຄອງຟາມໃຫ້ມີຄວາມສະໝໍ່າສະເໝີທາງດ້ານຄຸນະພາບ ແລະ ປະລິມານ
3. ການຂຶ້ນທະບຽນ ແລະ ຮັບຮອງເອົາສະມາຊິກພາຍໃນກຸ່ມ

4. ການພົວພັນກັບໜ່ວຍງານອອກໃບຢັ້ງຢືນ

## ກ. ການສ້າງລະບຽບ ແລະ ຂໍ້ກຳນົດພາຍໃນຂອງກຸ່ມຜູ້ຜະລິດກະສິກຳອິນຊີ

ອີງໃສ່ມາດຕະຖານສາກົນຂອງກຸ່ມຜູ້ຜະລິດກະສິກຳອິນຊີ ຕ້ອງໄດ້ສ້າງລະບຽບການຄຸ້ມຄອງພາຍໃນຂຶ້ນ ໂດຍອີງໃສ່ມາດຕະຖານ ແລະ ຂໍ້ຫ້າມຕ່າງໆຂອງກະສິກຳອິນຊີທີ່ມີຢູ່ໃນປະຈຸບັນນີ້ນັບທັງພາຍໃນແລະຕ່າງປະເທດ. ເພື່ອໃຫ້ສອດຄ່ອງກັບສະພາບການຜະລິດຂອງກຸ່ມຕົນເອງ.

## ຂ. ການຮັບສະມາຊິກ ແລະ ການກວດກາຄຸ້ມຄອງຟາມໃຫ້ມີຄວາມສະໝໍ່າສະເໝີທາງດ້ານຄຸນະພາບ ແລະ ປະລິມານ

ກຸ່ມກະສິກຳອິນຊີຈຳເປັນຕ້ອງໄດ້ສ້າງແບບຟອມສະໝັກ ເພື່ອໃຫ້ມີມາດຕະຖານໃນການຮັບສະໝັກເອົາສະມາຊິກຜູ້ທີ່ສົນໃຈຢາກສະໝັກເຂົ້າເປັນສະມາຊິກກຸ່ມຜະລິດກະສິກຳອິນຊີ. ເຊິ່ງແບບຟອມດັ່ງກ່າວນັ້ນຈະປະກອບດ້ວຍສັນຍາຕ່າງໆທີ່ຈະເຂົ້າຮ່ວມກຸ່ມການຜະລິດ, ປະຫວັດຟາມຂອງສະມາຊິກ, ແຜນທີ່ຕັ້ງຂອງຟາມ ແລະ ແຜນການຜະລິດປະຈຳປີຂອງສະມາຊິກ. ສະນັ້ນ, ທາງທີມງານວິຊາການຈະຕ້ອງໄດ້ກຳນົດເວລາຢ່າງຈະແຈ້ງໃນການກວດກາຟາມຂອງສະມາຊິກແຕ່ລະຄົນ ໂດຍໃຫ້ພິຈາລະນາຕາມລະດັບຄວາມສ່ຽງຈາກການຜະລິດ ແລະ ການປະຕິບັດຕາມມາດຕະຖານຂອງກະສິກຳອິນຊີຢ່າງເຄັ່ງຄັດ.

***ຂໍ້ຫ້າມ: ຫ້າມບໍ່ໃຫ້ຜູ້ກວດການັ້ນໆກວດກາຟາມຂອງຕົນເອງ ແລະ ຟາມຂອງຍາດພີ່ນ້ອງຕົນເອງ ແລະ ອີກປະການໜຶ່ງການກວດກາຟາມຄວນເຮັດປີລະ 1-2 ຄັ້ງເທົ່ານັ້ນ.***

## ຄ. ການຂຶ້ນທະບຽນ ແລະ ຮັບຮອງເອົາສະມາຊິກພາຍໃນກຸ່ມ

ການຂຶ້ນທະບຽນ ແລະ ຮັບຮອງເອົາສະມາຊິກພາຍໃນກຸ່ມ ນັ້ນແມ່ນເປັນໜ້າທີ່ຂອງຄະນະກຳມະການຄຸ້ມຄອງກຸ່ມເປັນຜູ້ພິຈາລະນາຮັບຮອງເອົາເປັນສະມາຊິກຢ່າງເປັນທາງການ. ນອກຈາກນັ້ນແລ້ວ, ຍັງຕ້ອງໄດ້ແຈ້ງຜົນການຮັບຮອງດັ່ງກ່າວນັ້ນໃຫ້ສະມາຊິກທັງໝົດໄດ້ຮັບຊາບຢ່າງເປັນທາງການ ພ້ອມທັງແຈ້ງໃຫ້ໜ່ວຍງານທີ່ຮັບຜິດຊອບນັ້ນບັນທຶກເຂົ້າໃນກຸ່ມໃຫ້ເປັນສະມາຊິກ ແລະ ເຄື່ອນໄຫວຖືກຕ້ອງຕາມຫຼັກການ.

ສະນັ້ນ, ເອກະສານຕ່າງໆທີ່ຈະປະກອບໃຫ້ຜູ້ທີ່ສົນໃຈຈະສະໝັກເຂົ້າເປັນສະມາຊິກນັ້ນຄວນປະກອບມີດັ່ງຕໍ່ໄປນີ້ຄື:

- ແບບຟອມຮັບສະໝັກເຂົ້າເປັນສະມາຊິກ
- ສັນຍາຕ່າງໆທີ່ກ່ຽວຂ້ອງ
- ເອກະສານສຳລັບປະກອບປະຫວັດຂອງຟາມ
- ແຜນການຜະລິດປະຈຳປີ
- ແຜນທີ່ຂອງຟາມ (ແຜນທີ່ຂອງຟາມທີ່ຈະນຳໃຊ້ເຂົ້າການຜະລິດກະສິກຳອິນຊີ)
- ເອກະສານກ່ຽວຂ້ອງກັບຂໍ້ກຳນົດ, ກົດລະບຽບຕ່າງໆກ່ຽວກັບການຜະລິດກະສິກຳອິນຊີ
- ແບບຟອມຕິດຕາມບັນທຶກປັດໄຈນຳເຂົ້າເພື່ອການຜະລິດ

ຖ້າຫາກວ່າເກີດກໍລະນີທີ່ກວດພົບວ່າສະມາຊິກກຸ່ມລະເມີດຕໍ່ລະບຽບວິໄນຂອງກຸ່ມ ທາງຄະນະຮັບຜິດຊອບຊີ້ນຳກຸ່ມກໍ່ຄວນປະຕິບັດດັ່ງຕໍ່ລົງໄປນີ້ຄື:

1. ກ່າວຕັກເຕືອນ
2. ປັບໄໝ ໃສ່ໂທດ ໂດຍໃຫ້ອີງໃສ່ຂໍ້ກຳນົດ ແລະ ກົດລະບຽບຂອງກຸ່ມ
3. ບັງຄັບໃຫ້ຜູ້ກ່ຽວນັ້ນລາອອກຈາກກຸ່ມ

### ງ. ການພົວພັນກັບໜ່ວຍງານອອກໃບຢັ້ງຢືນ

ການພົວພັນກັບໜ່ວຍງານອອກໃບຢັ້ງຢືນນັ້ນເປັນໜ້າທີ່ຂອງຄະນະຮັບຜິດຊອບກຸ່ມ ຫຼື ວ່າພະນັກງານວິຊາການທີ່ກ່ຽວຂ້ອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ວຽກງານດັ່ງກ່າວນີ້ຈາກຫົວໜ້າກຸ່ມ. ສິ່ງສຳຄັນທີ່ສຸດຂອງການສະເໜີອອກໃບຢັ້ງຢືນແຕ່ລະຄັ້ງນັ້ນ ທາງກຸ່ມຕ້ອງໄດ້ຕິດຄັດບົດລາຍງານປະຈຳປີກ່ຽວກັບລະບົບການຄຸ້ມຄອງພາຍໃນຟາມມາພ້ອມ

## ບົດທີ 4.2: ບົດຮຽນການຄຸ້ມຄອງພາຍໃນ, ການກວດກາ ແລະ ການຕິດຕາມ

### ອະທິບາຍຫຍໍ້:

ວຽກງານການຄຸ້ມຄອງພາຍໃນ, ການກວດກາ ແລະ ການຕິດຕາມຂອງລະບົບຜະລິດກະສິກຳແບບອິນຊີແມ່ນມີພາລະບົດບາດອັນສຳຄັນຕໍ່ທັງໝົດລະບົບການຜະລິດກະສິກຳອິນຊີ. ສະນັ້ນ, ຜູ້ທີ່ຈະມາຮັບຜິດຊອບວຽກງານດັ່ງກ່າວນີ້ຕ້ອງເປັນຄົນທີ່ມີຄວາມຮູ້, ຄວາມສາມາດທາງດ້ານວິຊາການຢູ່ໃນລະດັບທີ່ແນ່ນອນ ແລະ ເປັນທີ່ຍອມຮັບຂອງສັງຄົມ ພ້ອມດຽວກັນນັ້ນ, ນັກກວດກາພາຍໃນຟາມນັ້ນຈະຕ້ອງໄດ້ຜ່ານການຝຶກອົບຮົມ ແລະ ໄດ້ຮັບການຮັບຮອງຈາກໜ່ວຍງານອອກໃບຢັ້ງຢືນຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຫຼື ໜ່ວຍງານອອກໃບຢັ້ງຢືນອື່ນໆທີ່ກ່ຽວຂ້ອງ ເຊິ່ງເພິ່ນໄດ້ຮັບການຮັບຮອງຈາກສາກົນເປັນຕົ້ນ.

ສະນັ້ນ, ການກວດກາໂດຍສ່ວນໃຫຍ່ແລ້ວ ເພິ່ນມັກຈະເຮັດການກວດກາໃນເວລາຕົ້ນລະດູການຜະລິດ ຫຼື ໄລຍະເວລາທີ່ມີຄວາມສ່ຽງຕໍ່ການທີ່ຈະເກີດພະຍາດ ຫຼື ແມງໄມ້ລະບາດ ເພາະວ່າໄລຍະເວລານີ້ຊາວກະສິກອນເອງກໍ່ຈະນຳໃຊ້ສານເຄມີ ເພື່ອມາປາບສັດຕູພືດ ດ້ວຍເຫດນີ້, ນັກວິຊາການເອງຈຶ່ງຈຳເປັນຕ້ອງໄດ້ມີການຂຶ້ນແຜນເພື່ອລົງກວດສອບ ແລະ ກວດກາ.

### ຈຸດປະສົງ:

- ✓ ເພື່ອຫຼີກເວັ້ນຄວາມສ່ຽງທີ່ຊາວກະສິກອນຈະນຳໃຊ້ສານເຄມີເຂົ້າໃນລະບົບການຜະລິດ
- ✓ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກຕ່າງໆ
- ✓ ເພື່ອສ້າງໃຫ້ລະບົບການຜະລິດກະສິກຳອິນຊີມີຄວາມເຂັ້ມແຂງ
- ✓ ເພື່ອເຮັດໃຫ້ຜູ້ຜະລິດປະຕິບັດຕາມຂໍ້ກຳນົດ ແລະ ກົດລະບຽບຂອງກະສິກຳແບບອິນຊີຢ່າງເຂັ້ມງວດ

### ອຸປະກອນ:

- ເຈັ້ຍແຜ່ນໃຫຍ່
- ເຈັ້ຍ A4
- ບິກເຟີດ
- ສະກ໋ອດ
- ກະດານ
- ເຄື່ອງສາຍ ແອວຊີດີ

### ເວລາທີ່ໃຊ້:

- ✓ ໃຊ້ເວລາ 30 ນາທີ

### ຂັ້ນຕອນ ແລະ ເນື້ອໃນ:

ຂັ້ນຕອນໃນການກວດການັ້ນ ແມ່ນປະກອບມີລາຍລະອຽດດັ່ງຕໍ່ລົງໄປນີ້ຄື:

### ກ. ການກວດກາເອກະສານທີ່ກ່ຽວຂ້ອງກັບຟາມເຊັ່ນ:

- ກວດກາຂັ້ນຕອນການຜະລິດຕ່າງໆວ່າຊາວກະສິກອນປະຕິບັດຕາມຫຼັກການຜະລິດຢ່າງເຄັ່ງຄັດ ຫຼື ບໍ່
- ກວດກາພື້ນທີ່ການຜະລິດລວມທັງຟາມທີ່ຜະລິດກະສິກໍາແບບທົ່ວໄປ ທີ່ຢູ່ໃກ້ຄຽງ ແລະ ຟາມຜະລິດກະສິກໍາອິນຊີ
- ສຸ່ມກວດກາສະຖານທີ່ ເຊິ່ງຊາວກະສິກອນເກັບມ້ຽນເຄື່ອງມືການຜະລິດ, ສາງເກັບມ້ຽນຜົນຜະລິດ ແລະ ເອກະສານທີ່ກ່ຽວຂ້ອງ
- ລົງກວດກາສັງເກດສະຖານທີ່ການຜະລິດຂອງຊາວກະສິກອນ
- ສໍາພາດສະມາຊິກກຸ່ມຜູ້ຜະລິດກະສິກໍາອິນຊີ
- ຫຼັງຈາກນັ້ນກໍ່ຈະຕ້ອງໄດ້ບັນທຶກຂໍ້ມູນ ເພື່ອເກັບໄວ້ເປັນຫຼັກຖານອ້າງອີງໃນການຂໍອະນຸມັດອອກໃບຢັ້ງຢືນກະສິກໍາອິນຊີຈາກພາກສ່ວນທີ່ກ່ຽວຂ້ອງ.

### ຂ. ລະບົບການບັນທຶກຂໍ້ມູນ ແລະ ການເກັບມ້ຽນຂໍ້ມູນຂອງສະມາຊິກແຕ່ລະຄົນ:

ເອກະສານທີ່ສໍາຄັນກ່ຽວກັບການເກັບຮັກສາກໍ່ຄື: ເອກະສານຂໍ້ມູນຂອງສະມາຊິກແຕ່ລະຄົນ ດ້ວຍເຫດນີ້ເອກະສານດັ່ງກ່າວນີ້ຄວນຈະມີສອງ ຫຼື ສາມສະບັບ (ຊຸດ)ເປັນຢ່າງໜ້ອຍ ເພື່ອເກັບສໍາເນົາໄວ້ໜຶ່ງສະບັບ, ສະມາຊິກເກັບຮັກສາໄວ້ໜຶ່ງສະບັບ ແລະ ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງໜຶ່ງສະບັບ.

ສ່ວນປະກອບຂອງເອກະສານ ຈະປະກອບດ້ວຍດັ່ງລຸ່ມນີ້:

1. ເອກະສານສັນຍາຕ່າງໆທີ່ບຸກຄົນສະໝັກເຂົ້າເປັນສະມາຊິກກຸ່ມ
2. ຂໍ້ມູນກ່ຽວກັບສະມາຊິກ ເຊັ່ນ: ປະຫວັດຂອງຟາມ, ແຜນທີ່ຟາມ ແລະ ແຜນການຜະລິດຕ່າງໆ
3. ປຶ້ມລາຍງານການກວດກາ ແລະ ກວດສອບ
4. ປຶ້ມບັນທຶກການນຳເຂົ້າປັດໄຈການຜະລິດພາຍໃນຟາມ
5. ເອກະສານຕ່າງໆທີ່ກ່ຽວຂ້ອງກັບການສັ່ງຊື້ປັດໄຈການຜະລິດຈາກບໍລິສັດ (ຖ້າມີ)
6. ປຶ້ມສະຫຼຸບລາຍງານແຈ້ງຜົນການກວດກາຈາກວິຊາການທີ່ກ່ຽວຂ້ອງ

ເອກະສານທີ່ຈຳເປັນທີ່ຈະຕ້ອງໄດ້ສົ່ງໃຫ້ທາງໜ່ວຍງານອອກໃບຢັ້ງຢືນກະສິກຳອິນຊີ, ອີງຕາມຫຼັກການພື້ນຖານຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ໄດ້ກຳນົດໄວ້ໃນປຶ້ມຄູ່ມືກວດສອບພາຍໃນ ສະບັບປີ 2011, ເພິ່ນໄດ້ກຳນົດເປັນຫຼັກການໄວ້ທັງໝົດ 09 ເອກະສານທີ່ກ່ຽວຂ້ອງເຊັ່ນ:

1. ຂໍ້ມູນພື້ນຖານຂອງລະບົບຄວບຄຸມພາຍໃນກຸ່ມ
2. ຂໍ້ມູນພື້ນຖານຂອງສະມາຊິກທີ່ໄດ້ຮັບຮອງຢ່າງເປັນທາງການ. ສະນັ້ນ, ສະມາຊິກແຕ່ລະຄົນຕ້ອງມີເອກະສານທີ່ກ່ຽວຂ້ອງຄື:
    - ເອກະສານຢັ້ງຢືນລາຍຊື່ເປັນສະມາຊິກ
    - ລະຫັດຢັ້ງຢືນສະມາຊິກ
    - ເອກະສານຢັ້ງຢືນກ່ຽວກັບເນື້ອທີ່ທັງໝົດ ແລະ ເນື້ອທີ່ນຳມາສະເໜີຂໍອະນຸມັດຜະລິດກະສິກຳອິນຊີ
    - ວັນທີສະໝັກເຂົ້າເປັນສະມາຊິກກຸ່ມ
    - ຂໍ້ມູນບັນທຶກກ່ຽວກັບການນຳໃຊ້ສານເຄມີຄັ້ງສຸດທ້າຍ
    - ວັນທີກວດກາພາຍໃນຄັ້ງສຸດທ້າຍ
    - ເອກະສານຮັບຮອງການເຂົ້າເປັນສະມາຊິກ